# ຄຳແນະນຳສຳລັບພໍ່ແມ່ຊຶ່ງລູກຕ້ອງໄດ້ກວດເລືອດ

## Instructions to Parents Whose Children are to Have a Blood Test

ທ່ານໝໍຂອງລູກເຈົ້າໄດ້ມີຄຳສັ່ງໃຫ້ທຳການກວດເລືອດເພື່ອຄົ້ນຫາພຍາດ ແລະ/ຫລືວ່າ ເພື່ອຊ່ວຍໃນການວາງແຜນປິ່ນປົວ. ຂ້ອຍຈະໄດ້ເອົາໂຕຢ່າງເລືອດເລັກນ້ອຍຈາກ ນິ້ວມື ຫລື ສົ້ນນ່ອງ ຫລື ແຂນ.

ໂປຣດພຍາຍາມ ງຽບສງົບໄວ້ ເພາະວ່າຈະເປັນການຊ່ວຍໃຫ້ລູກຂອງທ່ານບໍ່ຢ້ານກົວ.

໑. ກະຣຸນານັ່ງລົງບ່ອນນີ້ ໂດຍເອົາລູກນັ່ງເທິງຫົວເຂົ່າຂອງເຈົ້າ.

໒. ຂ້ອຍຈະເອົາສາຍຢາງຣັດແຂນລູກເຈົ້າໄວ້ຊົ່ວຄາວເພື່ອໃຫ້ເສັ້ນເລືອດໂປ່ຂຶ້ນ.

໓. ຂ້ອຍຈະເອົາເຂັມແທງນິ້ວມື, ຫລື ສົ້ນນ່ອງ ຫລື ແຂນຂອງລູກເຈົ້າ. ເປັນການແທງບຶດດຽວ ແລະເຈັບແຕ່ວິນາທີດຽວເທົ່ານັ້ນ.

ເມື່ອແທງແລ້ວ ຂ້ອຍກໍຈະໝ່ຽມບ່ອນຮອຍເຂັມ ແລະມັນກໍຈະບໍ່ເຈັບຫລາຍປານໃດ.

໔. ເປັນສິ່ງສຳຄັນທີ່ລູກຕ້ອງບໍ່ເໜັງຕີງເລີຍໃນຂນະທີ່ຂ້ອຍທຳການກວດ. ກະຣຸນາຊ່ວຍຈັບລາວໄວ້ໃຫ້ຢູ່ຊື່ງດ້ວຍ ແລະການກວດກໍຈະສິ້ນສຸດໂດຍໄວ. ຫາກລາວດີ້ນກໍຈະຍິ່ງເຮັດໃຫ້ເຈັບຂຶ້ນ ແລະ ເຮົາອາດຈະໄດ້ເຮັດໃໝ່ອີກເທື່ອນຶ່ງ.

໕. ເມື່ອການກວດຮຽບຮ້ອຍແລ້ວ ຂ້ອຍຈະເອົາສາຍຢາງອອກ, ແລະຈະບອກໃຫ້ເຈົ້າເອົານິ້ວມືຂົ່ມສຳລີໄວ້.

ຢ່າມົວແຕ່ແນມເບິ່ງວ່າເລືອດເຈົ້າໄຫລແລ້ວບໍ່ຫລືຍັງ. ຫລັງຈາກນັ້ນ ຂ້ອຍຈະເອົາແຜ່ນຕິດແຜຕິດແຂນເຈົ້າໄວ້ເພື່ອບັງຮອຍເຂັມ. ເອົາແຜ່ນຕິດແຜນັ້ນອອກໄດ້ໃນມື້ແລງ.

໖. ກະຣຸນາຂຽນທີ່ຢູ່ຂອງທ່ານລົງໃຫ້ດ້ວຍ.

ຂໍຂອບໃຈໃນຄວາມຮ່ວມມື. ຜົນການກວດຈະໄດ້ສົ່ງໄປໃຫ້ທ່ານໝໍທີ່ແນະນຳທ່ານມາ. ລາກ່ອນ

ເບີໂທຣະສັບເຫຼົ່ານີ້ ແມ່ນຖືກຕ້ອງໃນເວລາທີ່ພິມເອກກະສານນີ້ ແຕ່ວ່າອາດມີການປ່ຽນແປງ. ທ່ານອາດຈະຕ້ອງໄດ້ກວດເບິ່ງເລກໂທຣ ໃນສມຸດໂທຣະສັບເບິ່ງໃໝ່.

Translated by the Health Translation Service
NSW Health Department, 1991

REVIEWED
September2004
NSWMulticulturalHealthCommunicationService